ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 270/ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2023

# ແຈ້ງການ

ເຖິງ: - ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;
- ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ;
- ຜູ້ອຳນວຍການ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
- ຜູ້ອຳນວຍການ ບໍລິສັດເຊົ່າສິນເຊື່ອ.

ເລື່ອງ: ປັບປຸງບາງມາດຕາ ຂອງຂໍ້ຕົກລົງວ່າດ້ວຍອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ ສະບັບເລກທີ 870/ທຫລ, 871/ທຫລ ແລະ 872/ທຫລ, ລົງວັນທີ 14 ພະຈິກ 2022.

ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງການມາຍັງບັນດາທ່ານຊາບວ່າ: ທະນາຄານແຫ່ງ ສປປ ລາວ ໄດ້ມີການປັບປຸງບາງເນື້ອໃນ ຂອງຂໍ້ທີ 3 ອັດຕາສວນໜີ້ທວງຍາກ ມາດຕາ 10 ວິທີການຄິດໄລ່ອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ ຂອງຂໍ້ຕົກລົງວ່າດ້ວຍອັດຕາສ່ວນທາງການເງິນ ເພື່ອຮັບສາຄວາມໝັ້ນຄົງ ຂອງສະຖາບັນການເງິນຈຸລະພາກ ສະບັບເລກທີ 870/ທຫລ, ລົງວັນທີ 14 ພະຈິກ 2022, ຂໍ້ຕົກລົງວ່າດ້ວຍອັດຕາສ່ວນທາງການເງິນ ເພື່ອຮັບສາຄວາມໝັ້ນຄົງ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 872/ທຫລ, ລົງວັນທີ 14 ພະຈິກ 2022 ແລະ ຂໍ້ທີ 3 ອັດຕາສ່ວນໜີ້ທວງຍາກ ມາດຕາ 9 ວິທີການຄິດໄລ່ອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ ຂອງຂໍ້ຕົກລົງວ່າດ້ວຍອັດຕາສ່ວນທາງການເງິນ ເພື່ອຮັບສາຄວາມໝັ້ນຄົງ ຂອງບໍລິສັດເຊົ່າສິນເຊື່ອ ສະບັບເລກທີ 871/ທຫລ, ລົງວັນທີ 14 ພະຈິກ 2022, ທີ່ໄດ້ມີການພິມຄຳສັບ ບໍ່ສອດຄ່ອງກັບການອະທິບາຍສັບ ຂອງໜີ້ຕ້ອງຮັບທວງຍາກ ແລະ ການກຳນົດເນື້ອໃນຂອງມາດຕາ 8 ຊັ້ນຕ່ຳກວ່າມາດຕະຖານ ຂອງຂໍ້ຕົກລົງວ່າດ້ວຍການຈັດຊັ້ນ ແລະ ຫັກເງິນແຮສິນເຊື່ອທີ່ຖືກຈັດຊັ້ນ ຂອງສະຖາບັນການເງິນຈຸລະພາກ ສະບັບເລກທີ 873/ທຫລ, ລົງວັນທີ 14 ພະຈິກ 2022 ແລະ ຂໍ້ຕົກລົງວ່າດ້ວຍການຈັດຊັ້ນ ແລະ ຫັກເງິນແຮສິນເຊື່ອທີ່ຖືກຈັດຊັ້ນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 874/ທຫລ, ລົງວັນທີ 14 ພະຈິກ 2022, ທີ່ໄດ້ກຳນົດເອົາໜີ້ຕ້ອງຮັບທວງຍາກ ເລີ່ມແຕ່ການຈັດຊັ້ນນັບແຕ່ 61 ວັນຂຶ້ນໄປ, ຊຶ່ງມີລາຍລະອຽດຂອງການປັບປຸງ ດັ່ງນີ້:

➢ <u>ສູດເດີມ:</u>

$$\text{ອັດຕາສ່ວນໜີ້ທວງຍາກ} = \frac{\text{ສິນເຊື່ອທີ່ເປັນໜີ້ທວງຍາກ (>ສາມສິບວັນຂຶ້ນໄປ)}}{\text{ຍອດເຫຼືອສິນເຊື່ອທັງໝົດ}}$$



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

- <u>**ສູດທີ່ໄດ້ປັບປຸງໃໝ່:**</u> ໄດ້ລຶບຄຳສັບ " >ສາມສິບວັນຂຶ້ນໄປ " ທີ່ກຳນົດຢູ່ທາງຫຼັງ ຂອງຄຳສັບ " ສິນເຊື່ອທີ່ເປັນໜີ້ທວງຍາກ"

$$\text{ອັດຕາສ່ວນໜີ້ທວງຍາກ} = \frac{\text{ສິນເຊື່ອທີ່ເປັນໜີ້ທວງຍາກ}}{\text{ຍອດເຫຼືອສິນເຊື່ອທັງໝົດ}}$$

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າກົມ**

ທະນາຄານ ແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ພູຊົງ **ຈັນທະຈັກ**